ກຳລັງທັບເສລີປະຊາທິປະໄຕລາວ
Lao Liberal Democratic Movement & Freedom Fighters
Central Representative P. O. Box 189486. 2121 Broadway St. Sacramento, CA. 95818. U.S.A.
P.O Box 189486. 2121 Broadway St. Sacramento. CA 95818 U.S.A.
www. Laofreedom.com

**ສູນກາງຕາງໜ້າ**

**ພັກ ແລະກຳລັງທັບເສລີປະຊາທິປະໄຕລາວ.**

*** ຫ້ອງການ ປະທານພັກເສລີປະຊາທິປະໄຕລາວ.**

**ສັບບທີ ໔໙໐ ປພຖຂ/໐໔໑໘໑໐**

# ສານອວຍພອນປີໃໝ່

## ອວຍພອນປີໃໝ່ ພສ. 2553.

ເນື່ອງໃນໂອກາດປີໃໝ່ ພສ. 2553. ນີ້, ໃນນາມຂອງພວກເຮົາ ປະຊາຊົນພັກ ແລະກຳລັງ ທັບເສລີປະຊາທິປະໄຕລາວ ແລະໃນນາມຂອງຂ້າພະເຈົ້າເອງ ຂໍອວຍໄຊໃຫ້ພອນ ແກ່ບັນດາ ທ່ານ ຜູ້ມີກຽດທັງຫລາຍ ຕລອດຮອດພໍ່ແມ່ພີ່ນ້ອງ ປະຊາຊົນລາວທຸກທົ່ວໜ້າ ຈົ່ງມີຄວາມມ່ວນຊື່ນເບີກບານ ຫາຍພຍາດໂຣຄາ ແລະມີຄວາມສຸຂຄວາມຈເຣີນ ທຸກໆທ່ານດ້ວຍເຖີ້ນ.

ພວກເຮົາ ຂໍຖືເອົາວັນຂື້ນປີໃໝ່ນີ້, ວິງວອນເອົາສິ່ງສັກສິດທັງຫລາຍ ໃນສາກົລະໂລກ, ດວງ ວິນຍານ ຂອງວີຣະບຸຣຸສ, ຂອງນັກຣົບຜູ້ກ້າຫານ ຈົ່ງໄດ້ດົນບັນດານ ໃຫ້ກົນລວງຂອງຊາດຕ່າງດ້າວ ທີ່ຄອບງຳຜູ້ນຳລາວ ທັງ 7 ທ່ານ ຢ່າງມືດມົດຂາດສະຕິນັ້ນ ໄດ້ຈືດຈາງຫາຍແລະຕົກໄປໃນປີເກົ່ານີ້ ດ້ວຍເຖີ້ນ.

ປີໃໝ່ລາວປີນີ້, ຂໍໃຫ້ເປັນປີແຫ່ງໄຊຊະນະ ໃນການທ້ອນໂຮມລາວ ໃຫ້ເປັນອັນນຶ່ງອັນດຽວກັນ. ເຮັດໃຫ້ປະຊາຊົນລາວທັງຊາດ ໄດ້ມີສິດທິເສຣີພາບ ປະຊາທິປະໄຕ ປະເທດຊາດມີຄວາມເປັນເອກຣາດ ແລະປະຊາຊົນ ມີຄວາມເປັນເອກພາບກັນ, **ໃຫ້ເປັນໄປຕາມຈິດໃຈ ຂອງວັນຊາດ 12 ຕຸລາ 1945 ທີ່ຂບວນລາວອິສຣະ ໄດ້ຈັດຕັ້ງຕໍ່ສູ້ ບຸກເບີກມາແລ້ວຢ່າງພິລາດອາດຫານ**, ຊຶ່ງປະຈຸບັນນີ້, ເຫລືອໄວ້ແຕ່ທຸງຊາດ ຕຣາວົງເດືອນ ໃຫ້ລູກຫລານໄດ້ສືບຕໍ່ເຮັດພາຣະກິດຊາດອັນສູງສົ່ງນີ້ ເພື່ອ **ລາວລວມລາວ** ໄດ້ສຳເຣັດຜົນໂດຍໄວ.

ການໂຮມລາວ ຄັ້ງທີ 1, 2 ແລະທີ 3 ໄດ້ເຮັດໃຫ້ປະຊາຊົນລາວທັງຊາດ ໄດ້ຮັບຄວາມຜິດຫວັງຢ່າງໃຫຍ່ຫລວງ ເພາະມັນບໍ່ເປັນໄປຕາມຈິດໃຈຂອງວັນຊາດ 12 ຕຸລາ,ມັນເປັນການສູນເສັຽ

ໂອກາດ ທີ່ລາວທັງຊາດ ຈະໄດ້ຢູ່ຮ່ວມກັນ ເລັ່ງສ້າງສາພັທນາປະເທດ ຫລັງຈາກສູນເສັຽຄວາມເປັນເອກຣາດມາແລ້ວ 4 ຊວ່າຄົນ. ການໂຮມລາວເພື່ອສ້າງສັນຕິພາບແລະຄວາມຖືກຕ້ອງປອງດອງຊາດຢູ່ລາວ ໃນປີ 1975 ນັ້ນ, ໄດ້ນຳຄວາມເສັຽຫາຍ ມາໃຫ້ແກ່ປະເທດຊາດຢ່າງມະຫາສານ. ມັນບໍ່ພຽງແຕ່ເປັນການໂຮມວຽດນາມກັບພັກປະຊາຊົນປະຕິວັບລາວເທົ້ານັ້ນ. ມັນຍັງນຳເອົາຊາດຕ່າງດ້າວເຂົ້າມາປຸ້ນຊາດປຸ້ນປະຊາຊົນ ຕາມສັນຍາມິຕພາບລາວ-ວຽດອີກດ້ວຍ. ຍິ່ງໄປກວ່ານັ້ນ, ມັນຍັງທັບມ້າງສັນຍາຮັບປະກັນ ຄວາມເປັນຊາດເອກຣາດຂອງລາວ ຈາກ13 ປະເທດຕື່ມອີກ. ສັ້ນ, ການຕໍ່ສູ້ຂອງພວກເຮົາ ປະຊາຊົນພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ ກໍຄືປະຊາຊົນລາວທັງຊາດ, ຈຶ່ງລົ້ມລຸກຄຸກຄານ, ທຸກຍາກລຳບາກເຫລືອທີ່ສຸດ. ບໍ່ແຕກຕ່າງຫຍັງກັບການຕໍ່ສູ້ຂອງລາວອິສຣະໃນອະດີດ. ແຕ່ຍ້ອນພັກແລະກຳລັງທັບຂອງພວກເຮົາ ມີນ້ຳໃຈຮັກຊາດ ອັນສູງສົ່ງ ມີຄວາມເສັຽສລະກ້າຫານ ແລະມີແນວທາງການຕໍ່ສູ້ ແບບສັນຕິວິທີ ສອດຄ່ອງກັບຄວາມມຸ້ງມາດປາຖນາຂອງປະຊາຊົນລາວ, ສອດຄ່ອງກັບແຜນສ້າງສັນຕິພາບໂລກ ແລະສອດຄ່ອງກັບຍຸກສມັຍ ຈຶ່ງພາໃຫ້ປະຊາຊົນ ບັນດາປະເທດເພື່ອນມິຕ ໃນທົ່ວໂລກ ມີຄວາມເຫັນອົກເຫັນໃຈປະຊາຊົນລາວທີ່ຖືກຕັດສິດທິເສຣີພາບ ແລະສູນເສັຽຄວາມເປັນເອກຣາດ ມາເປັນເວລາຍາວນານ ໄດ້ໃຫ້ການອູ້ມຊູສນັບສນູນ, ຫັນໜ້າເຂົ້າມາແກ້ໄຂບັນຫາລາວ ຢ່າງເອົາຈິງເອົາຈັງ, ດ້ວຍການບີບຣັດ ໃຫ້ພັກຣັດອອກມາໂອ້ລົມກັບພວກເຮົາ ເພື່ອພ້ອມກັນ ແກ້ໄຂບັນຫາ ຕາມແນວທາງສັນຕິວິທີໂດຍໄວ.

ສຸດທ້າຍນີ້, ພວກເຮົາ ຂໍໃຫ້ ທ່ານຜູ້ມີກຽດທັງຫລາຍ ຕລອດຮອດພໍ່ແມ່ພີ່ນ້ອງ ຄົນລາວທຸກທົ່ວໜ້າ ທັງໃນ ແລະນອກປະເທດ ຈົ່ງໄດ້ຊ່ວຍກັນຕໍ່ສູ້ຜັກດັນໃຫ້ **ລາວລວມລາວ** ຄັ້ງຍິ່ງໃຫຍ່ໃນປວັດສາດນີ້ ໄດ້ເກີດມີຂື້ນ ຢ່າງເປັນຮູບພຣະທັມ ເພື່ອຈະໄດ້ພົ້ນຈາກຄຳສາບ ຂອງສີໂຄຕຕະບອງໂດຍໄວ. ພວກເຮົາຈະໄດ້ພົບກັບແຜ່ນດິນແຫ່ງພຣະສັນຍາໃໝ່ ທີ່ເຕັມໄປດ້ວຍຄວາມມີອິສຣະພາບ ແລະຄວາມສາມະຄີ ຂອງຄົນໃນຊາດ ທີ່ຕັ້ງໜ້າ ສ້າງສາພັທນາປະເທດ ໃຫ້ມີຄວາມຈເຣີນສີວິໄລໄປຊວ່າຟ້າດິນສລາຍ.

**ປະຊາຊົນມີໄຊຍ໌ ເສຣີປະຊາທິປະໄຕອົງອາດ ຊາດລາວຈົ່ງຈເຣີນ.**

**ສູນກາງຕາງໜ້າ**
**ພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ**
**ຫ້ອງການປະທານພັກ**
**ອາຈານ ສົມບີກ ຟອງສູວັນ**
**ວັນທີ ໑໗ ເມສາ ໒໐໑໐.**